# ປະກາດ

ເຖິງບັນດາທ່ານຜູ້ທີ່ສົນໃຈສະໝັກເຮັດວຽກກັບ ທຄຕລ ໃຫ້ມີສະຕິລະວັງຕົວ ຢ່າໄດ້ຫຼົງເຊື່ອ ກຸ່ມຄົນບໍ່ດີ ທີ່ມີເຈດຕະນາແອບອ້າງວ່າສາມາດຊ່ວຍ ຫຼື ຂໍນະໂຍບາຍໃຫ້ຜູ້ສະໝັກເພື່ອໃຫ້ສາມາດຜ່ານ ແລະ ບັນຈຸເຂົ້າເປັນພະນັກງານ ທຄຕລ ໄດ້ ໂດຍຕ້ອງໄດ້ຈ່າຍເງິນເປັນຈຳນວນທີ່ມີມູນຄ່າສູງນັ້ນ, ການກະທຳດັ່ງກ່າວຖືເປັນປະກົດການຫຍໍ້ທໍ້ອັນໜຶ່ງໃນສັງຄົມ ທີ່ໄດ້ສ້າງຄວາມເສຍຫາຍ ໃຫ້ແກ່ຊື່ສຽງ ແລະ ພາບພົດຂອງການຈັດຕັ້ງ ທຄຕລ.

ການສະໝັກວຽກຢູ່ ທຄຕລ ແມ່ນປະຕິບັດຕາມຂັ້ນຕອນ ແລະ ລະບຽບຂອງການສອບເສັງທີ່ ທຄຕລ ວາງອອກຢ່າງເຄັ່ງຄັດ. ຜູ້ສະໝັກທີ່ມີເງື່ອນໄຂຄົບຖ້ວນ ແລະ ຖືກຕ້ອງເທົ່ານັ້ນຈຶ່ງຈະສາມາດປະກອບຟອມ, ສອບເສັງ ແລະ ສຳພາດຄັດເລືອກໂດຍອີງໃສ່ຄວາມຮູ້, ຄວາມສາມາດຕົວຈິງຂອງຜູ້ສະໝັກ.

ທຄຕລ ມີຄວາມຕັ້ງໃຈ ແລະ ຕ້ອງການເພື່ອນຮ່ວມງານ ທີ່ມີຄວາມຮູ້ ຄວາມສາມາດ ທີ່ຈະມາຊ່ວຍສ້າງສາພັດທະນາ ທຄຕລ ໄປພ້ອມໆກັນ. ຖ້າຫາກທ່ານໃດມີຂໍ້ມູນຄວາມຈິງກ່ຽວກັບການກະທຳບໍ່ດີທີ່ໄດ້ກ່າວມາຂ້າງເທິງນັ້ນ ສາມາດແຈ້ງມາຍັງ ພະແນກຈັດຕັ້ງ-ພະນັກງານ, ທຄຕລ ສຳນັກງານໃຫຍ່ ໂທ: 021 213 200 ຕໍ່ 417-418 ຫຼື ທຄຕລ ສາຂາຕ່າງໆໃນຂອບເຂດທົ່ວປະເທດ.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ເປັນປະໂຫຍດໃນການພິຈາລະນາຮັບຂໍ້ມູນຂ່າວສານດ້ວຍ.

ນະຄອນຫຼວງວຽງຈັນ, ວັນທີ 29/10/2015

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ